# ພະແນກປົກຄອງຄວາມແກ່ຊາຣາ ແລະ ການອູ້ມຊູຣະຍະຍາວ

## ແບບວິທີທາງການຂອງການສັງເກດເບິ່ງຜິວໜັງ
## ຮູບພາບ ແລະ ການບັນຣະຍາຍຂອງບາດແຜເຂ່ງຕຶງ

### ຂັ້ນທີ I

ການປ່ຽນແປງຂອງຜິວໜັງຕິດຢູ່ທີ່ກ່ຽວຂ້ອງນຳຄວາມເຂ່ງຕຶງທີ່ສັງເກດເຫັນໄດ້ທີ່ມີສິ່ງຊີ້ບອກເມື່ອຖືກປຽບທຽບໃສ່ບໍຣິເວນທາງຂ້າງ ຫລື ກົງກັນຂ້າມຢູ່ໃນຮ່າງກາຍ. ສິ່ງຊີ້ບອກເຫລົ່າອາດຈະລວມເອົາການປ່ຽນແປງໃນນຶ່ງ ຫລື ຫລາຍຢ່າງຂອງສິ່ງຕໍ່ລົງໄປນີ້: ອຸນຫະພູມຂອງຮ່າງກາຍ, ຄວາມສະໝ່ຳສະເມີຂອງເນື້ອ,ແ ລະ/ຫລື ຄວາມຮູ້ສຶກ. ຢູ່ໃນຜິວໜັງສີຈາງໆ, ບາດແຜຈະປາກົດວ່າເປັນບໍຣິເວນສະເພາະທີ່ເປັນສີແດງສະເມີ. ຢູ່ໃນຜິວໜັງດຳກວ່າ, ບາດແຜອາດຈະປາກົດເປັນສີແດງ, ຟ້າ, ຫລື ສີມ່ວງ.

### ຂັ້ນທີ II

ການສູນເສັຽຄວາມໜາຂອງຜິວໜັງສ່ວນນຶ່ງທີ່ກ່ຽວພັນນຳເອປີເດີມິສ, ເດີມິສ, ຫລື ທັງສອງຢ່າງ. ບາດແຜຈະເປັນຜິວເຜີນ ແລະ ອີງຕາມທາງການແພດແລ້ວວ່າເປັນຮອຍຂູດ, ຕຸ່ມຕາມຜິວໜັງ, ຫລື ຂຸມຕື້ນໆ.

### ຂັ້ນທີ III

ການສູນເສັຽຄວາມໜາຂອງຜິວໜັງທັງໝົດທີ່ກ່ຽວພັນນຳຄວາມເສັຽຫາຍ ຫລື ແຊລ໌ຕາຍຂອງເນື້ອກ້ອງຜິວໜັງຊຶ່ງອາດຈະຕໍ່ລົງໄປເຖິງ, ແຕ່ວ່າບໍ່ຊອດ, ເຖິງເນື້ອຢູ່ກ້ອງນັ້ນອີກ. ບາດແຜຈະເປັນອີງຕາມທາງການແພດແລ້ວວ່າເປັນຂຸມເລິກທີ່ມີ ຫລື ບໍ່ມີການທຳລາຍເນື້ອທາງຂ້າງ.

### ຂັ້ນທີ IV

ການສູນເສັຽຄວາມໜາຂອງຜິວໜັງທີ່ມີການທຳລາຍອັນຮ້າຍແຮງ, ການຕາຍຂອງເນື້ອ, ຫລື ຄວາມເສັຽຫາຍຕໍ່ກ້າມເນື້ອ, ກະດູກ, ຫລື ໂຄງຮ່າງອູ້ມຊູ (ເຊັ່ນວ່າ, ເສັ້ນເອັນ, ໜ່ວຍຂໍ່ຕໍ່) . ການທຳລາຍ ແລະ ທໍ່ຮູດັງອາດຈະພົວພັນນຳບາດແຜຂັ້ນທີ IV.

- ບາດແຜຂັ້ນທີ 1 ອາດຈະບໍ່ຖືກກວດພົບໄດ້ແນ່ນອນເລື້ອຍໆໃນຄົນເຈັບຜູ້ທີ່ມີຜິວໜັງດຳຊ້ຳເຂົ້າ.
- ເມື່ອເວລາມີກາບໜັງແຫ້ງຢູ່, ບາດແຜຈະບໍ່ສາມາດຖືກກວດພະຍາດໄດ້ຢ່າງຖືກຕ້ອງຈົນກວ່າກາບໜັງແຫ້ງໄດ້ຖືກເອົາອອກ.
- ໃຫ້ລະມັດລະວັງຕໍ່ຄວາມເຈັບປວດທີ່ເກີດມາຈາກຄວາມກົດດັນໃນຄົນເຈັບທີ່ມີແປ້ງໂອບທໍ່ ຫລື ຖົງສວມໃສ່ອູ້ມຊູ.

ຖືກປັບປ່ຽນມາຈາກຄຳແຈ້ງການກ່ຽວກັບການປ້ອງກັນບາດແຜເຂ່ງຕຶງສະງວນລິກຂະສິດ 1998.
ຖືກໃຊ້ດ້ວຍຄຳອະນຸຍາດຂອງຄະນະແນະນປຶກສາກ່ຽວກັບບາດແຜເຂ່ງຕຶງແຫ່ງຊາດ.




ALTSA-CNC/ການບໍຣິການນາຍໜໍ
APRIL 2003